EDD Call Center (ສູນໂທEDD)
ຕູ້ ປ .ນ .
ເມືອງ ລັດຄາລິຟໍເນຍ (CA) ລະຫັດໄປສະນີ

EDD Employment Development Department State of California

ວັນທີສົ່ງ: **00/00/0000**
SSN: **000-00-0000**

ຊື່ຜູ້ຮຽກຮ້ອງ
ທີ່ຢູ່ຜູ້ຮຽກຮ້ອງ
ເມືອງ, ລັດຄາລິຟໍເນຍ (CA) ລະຫັດໄປສະນີ

ເບີໂທລະສັບຂອງ EDD:

| | |
|---|---|
| ພາສາອັງກິດ | 1-800-300-5616 |
| ພາສາສະເປນ | 1-800-326-8937 |
| ພາສາຄັນໂຕນີສ | 1-800-547--3506 |
| ພາສາແມນດາຣິນ | 1-866-303-0706 |
| ພາສາຫວຽດນາມ | 1-800-547-2058 |
| TTY (ບໍ່ມີສຽງ) | 1-800-815-9387 |
| ເວັບໄຊທ໌: | **www.edd.ca.gov** |

ຕົວຢ່າງ

## ແຈ້ງການເລື່ອງການຕັດສິນປະກັນໄພການຫວ່າງງານ

**1.** ວັນທີເລີ່ມຕົ້ນການຮຽກຮ້ອງ: 00/00/0000 **2.** ວັນທີສິ້ນສຸດການຮຽກຮ້ອງ: 00/00/0000

**3.** ຈຳນວນເງິນຊ່ວຍເຫຼືອສູງສຸດ: $0000 **4.** ຈຳນວນເງິນຊ່ວຍເຫຼືອປະຈຳອາທິດ: $0000

**5.** ຄ່າຈ້າງທັງໝົດ: 00,000.00 **6.** ເງິນທີ່ຫາໄດ້ປະຈຳໄຕມາດສູງສຸດ: 0,000.00

**7.** ລາຍການນີ້ບໍ່ໃຊ້ກັບການຮຽກຮ້ອງຂອງທ່ານ: ສຳລັບຂໍ້ມູນເພີ່ມເຕີມ, ໃຫ້ເບິ່ງລາຍການທີ 7 ຢູ່ດ້ານຫຼັງ.

**8.** **ທ່ານຕ້ອງຊອກຫາວຽກເຮັດເຕັມເວລາໃນແຕ່ລະອາທິດ.** ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເບິ່ງປຶ້ມຄູ່ມືຂອງທ່ານ, *ຂໍ້ແນະນຳຕໍ່ການບໍລິການຈ້າງງານ ແລະ ເງິນຊ່ວຍເຫຼືອ*, DE 1275A, ມີໃຫ້ທາງອອນລາຍຢູ່ທີ່ **www.edd.ca.gov/forms/**.

**9.** ລາຍການນີ້ບໍ່ໃຊ້ກັບການຮຽກຮ້ອງຂອງທ່ານ:

**10.** ການຕັດສິນຂໍ້ຮຽກຮ້ອງນີ້ແມ່ນຄິດໄລ່ຕາມໄລຍະເວລາພື້ນຖານ (ມາດຕະຖານ ຫຼື ທາງເລືອກ).

| **11. ຊື່ລູກຈ້າງ:** | **12. ຄ່າຈ້າງຂອງລູກຈ້າງສຳລັບການຈັບໄຕມາດ:** | | | | **13. ຊື່ນາຍຈ້າງ:** |
|---|---|---|---|---|---|
| | **ເດືອນ/ປີ** | **ເດືອນ/ປີ** | **ເດືອນ/ປີ** | **ເດືອນ/ປີ** | |
| ຊື່ຜູ້ຮຽກຮ້ອງ | **0,000** | **0,000** | **0,000** | **0,000** | **ABC CO** |
| **14. ລວມທັງໝົດ:** | **0,000** | **0,000** | **0,000** | **0,000** | |

**ຂໍ້ມູນສຳຄັນຢູ່ໃນໜ້າຕໍ່ໄປ**

**ຕໍ່ໄປນີ້ແມ່ນຂໍ້ມູນເພີ່ມເຕີມກ່ຽວກັບລາຍການຢູ່ດ້ານຫຼັງຂອງໜ້ານີ້**

1. ວັນທີເລີ່ມຕົ້ນການຮຽກຮ້ອງ: ວັນທີການຮຽກຮ້ອງຂອງທ່ານເລີ່ມຕົ້ນ.
2. ວັນທີສິ້ນສຸດການຮຽກຮ້ອງ: ວັນທີການຮຽກຮ້ອງຂອງທ່ານສິ້ນສຸດ.
3. ຈຳນວນເງິນຊ່ວຍເຫຼືອສູງສຸດ: ຈຳນວນເງິນທັງໝົດທີ່ທ່ານສາມາດໄດ້ຮັບຈາກການຮຽກຮ້ອງນີ້.
4. ຈຳນວນເງິນຊ່ວຍເຫຼືອປະຈຳອາທິດ: ຈຳນວນເງິນສູງສຸດທີ່ທ່ານສາມາດໄດ້ຮັບແຕ່ລະອາທິດ, ຖ້າທ່ານບັນລຸໄດ້ຕາມເງື່ອນໄຂກຳນົດການມີສິດໄດ້ຮັບເປັນອາທິດ.
5. ຄ່າຈ້າງທັງໝົດ: ຈຳນວນເງິນທັງໝົດທີ່ຫາມາໄດ້ທີ່ນາຍຈ້າງລາຍງານໃນລະຫວ່າງໄຕມາດຕ່າງໆທີ່ເຮັດເປັນລາຍການໄວ້ຢູ່ໜ້າດ້ານຫຼັງໃນລາຍການທີ 12. ເງິນທີ່ຫາມາໄດ້ເຫຼົ່ານີ້ຖືກນຳໄປໃຊ້ຄິດໄລ່ຈຳນວນເງິນຊ່ວຍເຫຼືອສູງສຸດຂອງທ່ານ.
6. ເງິນທີ່ຫາໄດ້ປະຈຳໄຕມາດສູງສຸດ: ໄຕມາດຕາມປະຕິທິນທີ່ເຮັດເປັນລາຍການໄວ້ຢູ່ໜ້າດ້ານຫຼັງໃລາຍການທີ 12 ພ້ອມກັບຈຳນວນເງິນຫາມາໄດ້ສູງສຸດ. ເງິນທີ່ຫາມາໄດ້ເຫຼົ່ານີ້ກຳນົດຈຳນວນເງິນຊ່ວຍເຫຼືອປະຈຳອາທິດຂອງທ່ານ.
7. ຄຳຕັດສິນທີ່ໃຫ້ໄວ້ຢູ່ໜ້າດ້ານຫຼັງໃນລາຍການທີ 7 ແມ່ນຄຳຕັດສິນຂອງທ່ານ ໂດຍບໍ່ມີຄ່າຈ້າງທີ່ຫາມາໄດ້ຈາກໂຮງຮຽນຂອງລັດ ຫຼືບໍ່ຫວັງຜົນກຳໄລ. ຖ້າທ່ານເຮັດວຽກໃຫ້ກັບໂຮງຮຽນຂອງລັດ ຫຼືບໍ່ຫວັງຜົນກຳໄລໃນລະຫວ່າງໄຕມາດໃດໜຶ່ງທີ່ເຮັດເປັນລາຍການໄວ້ຢູ່ໜ້າດ້ານຫຼັງໃນລາຍການທີ 12, ທ່ານອາດຈະບໍ່ສາມາດໃຊ້ຄ່າຈ້າງເຫຼົ່ານັ້ນຢູ່ໃນການຮຽກຮ້ອງຂອງທ່ານໃນລະຫວ່າງໄລຍະພັກໂຮງຮຽນໄດ້.
8. ທ່ານຕ້ອງປະຕິບັດຕາມຄຳແນະນຳຢູ່ໜ້າດ້ານຫຼັງໃນລາຍການທີ 8 ເພື່ອໃຫ້ມີສິດໄດ້ຮັບເງິນຊ່ວຍເຫຼືອ. ຕາມກົດໝາຍແລ້ວ ທ່ານຕ້ອງໃຊ້ຄວາມພະຍາຍາມຊອກຫາວຽກຢ່າງເຕັມທີ່ ເມື່ອຮຽກຮ້ອງເງິນຊ່ວຍເຫຼືອ.
9. ກົດໝາຍປະກັນໄພການຫວ່າງງານ (ຂໍ້ທີ 1277) ຮຽກຮ້ອງໃຫ້ທ່ານເຮັດວຽກຢູ່ລະຫວ່າງວັນທີເລີ່ມຕົ້ນ ແລະວັນທີສຸດທ້າຍຂອງການຮຽກຮ້ອງມາກ່ອນ ເພື່ອໃຫ້ຂໍ້ຮຽກຮ້ອງໃຊ້ໄດ້ໃນປີໜ້າ. ຖ້າອັນນີ້ໃຊ້ໄດ້ກັບການຮຽກຮ້ອງຂອງທ່ານ ທ່ານຈະໄດ້ຮັບການແນະນຳເພີ່ມເຕີມ.
10. ປະເພດຂອງໄລຍະພື້ນຖານໃຊ້ເພື່ອກຳນົດການຮຽກຮ້ອງຂອງທ່ານ; ມັນຈະເປັນໄລຍະພື້ນຖານມາດຕະຖານ ຫຼືໄລຍະພື້ນຖານທາງເລືອກ. ຖ້າທ່ານບໍ່ມີຄ່າຈ້າງພຽງພໍຢູ່ໃນໄລຍະພື້ນຖານມາດຕະຖານ ເພື່ອກຳນົດການຮຽກຮ້ອງນຳໃຊ້ໄດ້, ທ່ານອາດຈະມີສິດໃຊ້ໄລຍະພື້ນຖານທາງເລືອກໄດ້. ສຳລັບຂໍ້ມູນເພີ່ມເຕີມ, ທວນຄືນເບິ່ງປຶ້ມຄູ່ມື, ***ຂໍ້ແນະນຳຕໍ່ການບໍລິການຈ້າງງານ ແລະເງິນຊ່ວຍເຫຼືອ,*** **DE 1275A**, ມີຢູ່ທີ່ www.edd.ca.gov/forms/.
11. ຊື່ລູກຈ້າງ: ຊື່ທີ່ນາຍຈ້າງຂອງທ່ານໃຊ້ ເພື່ອລາຍງານເງິນຫາໄດ້ຂອງທ່ານໃຫ້ກັບກົມພັດທະນາການຈ້າງງານ (Employment Development Department (EDD)) ໃນແຕ່ລະງວດຕາມປະຕິທິນທີ່ໄດ້ເຮັດເປັນລາຍການໄວ້ຢູ່ໜ້າດ້ານຫຼັງໃນລາຍການທີ 11.
12. ຄ່າຈ້າງຂອງລູກຈ້າງສຳລັບການຈັບໄຕມາດຕາມປະຕິທິນ: ສິ່ງເຫຼົ່ານີ້ແມ່ນຄ່າຈ້າງທີ່ສາມາດໃຊ້ໄດ້ ເພື່ອຈຸດປະສົງທາງດ້ານປະກັນໄພການຫວ່າງງານທີ່ນາຍຈ້າງຂອງທ່ານລາຍງານວ່າທ່ານໄດ້ຮັບໃນແຕ່ລະງວດຕາມປະຕິທິນທີ່ເຮັດເປັນລາຍການໄວ້. ເງິນທີ່ຫາມາໄດ້ເຫຼົ່ານີ້ກຳນົດຈຳນວນເງິນຕັດສິນໃຫ້ປະກັນໄພການຫວ່າງງານ (UI) ຂອງທ່ານ.
13. ຊື່ນາຍຈ້າງ: ຊື່ຂອງນາຍຈ້າງທີ່ທ່ານເຮັດວຽກໃຫ້ໃນງວດຕາມປະຕິທິນທີ່ໄດ້ເຮັດເປັນລາຍການໄວ້ຢູ່ໜ້າດ້ານຫຼັງໃນລາຍການທີ 13.
14. ລວມ: ຈຳນວນເງິນທັງໝົດທີ່ຫາມາໄດ້ທີ່ນາຍຈ້າງລາຍງານໃນແຕ່ລະໄຕມາດຕາມປະຕິທິນ ທີ່ເຮັດເປັນລາຍການໄວ້ຢູ່ໜ້າດ້ານຫຼັງໃນລາຍການທີ 12.

**ການຮຽກຮ້ອງຂອງທ່ານໃຊ້ບໍ່ໄດ້ ຖ້າ:**

ກ. ເງິນທີ່ຫາມາໄດ້ຂອງທ່ານບໍ່ພຽງພໍທີ່ຈະບັນລຸໄດ້ຕາມເງື່ອນໄຂກຳນົດຕໍ່າສຸດ.

ຂ. ທ່ານມີການຮຽກຮ້ອງ UI ມາກ່ອນ ແລະບໍ່ບັນລຸໄດ້ຕາມເງື່ອນໄຂກຳນົດສຳລັບຄ່າຈ້າງການເຮັດວຽກ ແລະການຫາເງິນທີ່ຈຳເປັນໃຫ້ການຮຽກຮ້ອງນຳໃຊ້ໄດ້ພາຍຫຼັງ.

**ສິ່ງສຳຄັນ:**

ໃຫ້ກວດຄືນເບິ່ງແຈ້ງການນີ້ຢ່າງລະອຽດ ເພື່ອເບິ່ງໃຫ້ແນ່ໃຈວ່າ ນາຍຈ້າງທຸກຄົນທີ່ທ່ານເຮັດວຽກໃຫ້ຢູ່ໃນໄຕມາດຕາມປະຕິທິນທີ່ສະແດງນັ້ນ, (ຢູ່ໜ້າດ້ານຫຼັງໃນລາຍການທີ 12) ໄດ້ເຮັດເປັນລາຍການໄວ້ ແລະດັ່ງນັ້ນ ຄ່າຈ້າງທີ່ທ່ານຫາໄດ້ສະແດງຂຶ້ນ. ຖ້າມີນາຍຈ້າງຄົນໜຶ່ງຢູ່ໃນລາຍການ ແລະທ່ານບໍ່ໄດ້ເຮັດວຽກໃຫ້ກັບເຂົາເຈົ້າ, ຫຼືຖ້ານາຍຈ້າງບໍ່ຢູ່ໃນລາຍການ, ຫຼືຄ່າຈ້າງຂອງທ່ານບໍ່ຖືກຕ້ອງ, ໃຫ້ຕິດຕໍ່ກັບຫ້ອງການ EDD ທັນທີ ເພື່ອຂໍໃຫ້ມີການຄິດໄລ່ໃຫ້ຖືກຕ້ອງ. ທ່ານອາດຈະຖືກຕັດສິດ, ມີການຈ່າຍໃຫ້ເກີນ, ແລະ/ຫຼືຖືກລົງໂທດທາງອາຍາໄດ້ ທີ່ບໍ່ໄດ້ແຈ້ງໃຫ້ກັບທາງ EDD ທັນທີຕໍ່ກັບຂໍ້ມູນການຈ້າງງານ ແລະຄ່າຈ້າງທີ່ບໍ່ຖືກຕ້ອງສະແດງໄວ້ຢູ່ໃນລາຍການທີ 12.

ຖ້າທ່ານໄດ້ເຮັດວຽກໃຫ້ກັບໜ່ວຍງານຂອງລັດຖະບານກາງ ຄ່າຈ້າງຂອງທ່ານຕ້ອງຂໍເອົາມາຈາກໜ່ວຍງານຂອງລັດຖະບານກາງນັ້ນ.

ທ່ານຈະໄດ້ຮັບ *ແຈ້ງການຕັດສິນການໃຫ້ປະກັນໄພການຫວ່າງງານສະບັບດັດແກ້*ພ້ອມກັບຄ່າຈ້າງເຫຼົ່ານີ້ເພີ່ມເຂົ້ານຳ.

ຖ້າແຈ້ງການນີ້ ຫຼືແຈ້ງການສະບັບດັດແກ້ບໍ່ຖືກຕ້ອງ ແລະທ່ານຕ້ອງການຂໍໃຫ້ມີການຄິດໄລ່ໃຫ້ຖືກຕ້ອງ ຫຼືໃຫ້ມີການຄິດໄລ່ຄືນໃໝ່, ທ່ານຕ້ອງຕິດຕໍ່ກັບທາງ EDD ພາຍໃນ 30 ວັນຫຼັງຈາກວັນທີສົ່ງແຈ້ງການ ຫຼືແຈ້ງການສະບັບດັດແກ້ທາງໄປສະນີແລ້ວ. ຖ້າບໍ່ດັ່ງນັ້ນ, ການກວດກາຄ່າຈ້າງ ຫຼືການຄິດໄລ່ຄືນໃໝ່ອາດຈະຖືກປະຕິເສດໄດ້. ອາດຈະຕໍ່ໄລຍະເວລາ 30 ວັນໃຫ້ໄດ້ສຳລັບການມີເຫດຜົນທີ່ຟັງຂຶ້ນ. ຖ້າທ່ານຈຳເປັນຕ້ອງໄດ້ຕິດຕໍ່ກັບທາງ EDD, ທ່ານຈຳເປັນຕ້ອງບອກຊື່ເຕັມ, ທີ່ຢູ່, ແລະໝາຍເລກປະກັນສັງຄົມຂອງທ່ານ, ແລະຖ້າມີຄວາມຈຳເປັນຕ້ອງບອກຂໍ້ມູນຄ່າຈ້າງ ແລະການຈ້າງງານທີ່ທ່ານຕ້ອງການເອົາເພີ່ມໃສ່ກັບການຮຽກຮ້ອງຂອງທ່ານນຳ, ຫຼືເພື່ອເອົານາຍຈ້າງຄົນໃດໜຶ່ງ ຜູ້ທີ່ທ່ານບໍ່ໄດ້ເຮັດວຽກໃຫ້ ແລະບໍ່ໄດ້ຄ່າຈ້າງນຳນັ້ນອອກໄປ.

**ທ່ານມີຄວາມຮັບຜິດຊອບທີ່ຈະຕ້ອງຮູ້ຈັກເນື້ອໃນຂອງ *ເງິນຊ່ວຍເຫຼືອປະກັນໄພການຫວ່າງງານ: ສິ່ງທີ່ທ່ານຈຳເປັນຕ້ອງຮູ້ຈັກ*, DE 1275B, ແລະເນື້ອໃນຂອງປຶ້ມຄູ່ມື, *ຂໍ້ແນະນຳຕໍ່ການບໍລິການຈ້າງງານ ແລະເງິນຊ່ວຍເຫຼືອ*, DE 1275A. ເອກະສານທັງສອງອະທິບາຍສິດ ແລະຄວາມຮັບຜິດຊອບການຈ້າງງານຂອງທ່ານ ແລະມີໃຫ້ຢູ່ທີ່ WWW.EDD.CA.GOV/FORMS/.**

**ເພື່ອຮັບເອົາເງິນຊ່ວຍເຫຼືອ UI, ທ່ານຕ້ອງຢັ້ງຢືນເງິນຊ່ວຍເຫຼືອດ້ວຍການໃຊ້ວິທີໃດໜຶ່ງຕໍ່ໄປນີ້ສີ: UI ONLINE℠, EDD TELE-CERT℠, ຫຼືສົ່ງແບບຟອມ*ການຮຽກຮ້ອງສືບຕໍ່*ສະບັບເຈ້ຍ, DE 4581. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການຢັ້ງຢືນເງິນຊ່ວຍເຫຼືອ, ໃຫ້ເບິ່ງປຶ້ມຄູ່ມື DE 1275A ເຊິ່ງມີໃຫ້ທາງອອນລາຍຢູ່ທີ່ WWW.EDD.CA.GOV/FORMS/.**

**ວິທີຍົກເລີກການຮຽກຮ້ອງ UI:**

ທ່ານມີທາງເລືອກການຍົກເລີກການຮຽກຮ້ອງ UI ຂອງລັດຄາລີຟໍເນຍປົກກະຕິໄດ້ ຫຼັງຈາກທ່ານໄດ້ຮັບແຈ້ງການ*ຕັດສິນປະກັນໄພການຫວ່າງງານ*ແລ້ວ.

ຖ້າທ່ານຕ້ອງການຍົກເລີກການຮຽກຮ້ອງຂອງທ່ານ, ທ່ານຕ້ອງຕິດຕໍ່ກັບ EDD ທັນທີ. ຢ່າຢັ້ງຢືນເງິນຊ່ວຍເຫຼືອ UI ໂດຍການສົ່ງ*ແບບຟອມການຮຽກຮ້ອງສືບຕໍ່*ຂອງທ່ານຄືນໂດຍທາງໄປສະນີ, DE 4581, ຫຼືໂດຍການໃຊ້ UI ONLINE℠, EDD Tele-Cert℠, ຫຼື ໂດຍການສົ່ງ*ແບບຟອມຮ້ອງຮຽນສືບຕໍ່*ສະບັບເຈ້ຍ,DE 4581. ກົດໝາຍອະນຸຍາດໃຫ້ທ່ານຍົກເລີກການຮຽກຮ້ອງ UI ໄດ້ພຽງແຕ່ ຖ້າບໍ່ທັນໄດ້ຈ່າຍເງິນຊ່ວຍເຫຼືອໃຫ້, ບໍ່ໄດ້ສົ່ງແຈ້ງການເລື່ອງການຕັດສິດໃຫ້ກັບທ່ານ, ບໍ່ທັນໄດ້ມີການກຳນົດການຈ່າຍເກີນໃຫ້ຢູ່ໃນການຮຽກຮ້ອງ, ແລະປີເງິນຊ່ວຍເຫຼືອໃນການຮຽກຮ້ອງຂອງທ່ານບໍ່ທັນໝົດ. ຖ້າການຮຽກຮ້ອງຖືກຍົກເລີກ, ບໍ່ສາມາດເປີດມັນຄືນໃໝ່ໄດ້. ທ່ານຕ້ອງຍື່ນການຮຽກຮ້ອງພາຍຫຼັງ.

ຕົວຢ່າງ